ລະບຽບການເງິນໂຮງຮຽນຝຣັ່ງນາໆຊາດວຽງຈັນ Josué-Hoffet ສົກຮຽນ 2018-2019

1. **ຄ່າທຳນຽມສະໝັກຮຽນຄັ້ງທຳອິດ**

ຄ່າທຳນຽມສະໝັກຮຽນຄັ້ງທຳອິດຕອ້ງຊຳລະໃນເວລາສະໝັກ (ມື້ຍື່ນເອກະສານ) ນີ້ກໍ່ເພື່ອຮັບປະກັນບອ່ນຮຽນໃນໂຮງຮຽນ ຫຼື ຈອງບອ່ນໃນບັນຊີລໍຖ້າ.

2. **ຄ່າທຳນຽມສະໝັກຮຽນຕໍ່**

ຄ່າທຳນຽມສະໝັກຮຽນຕໍ່ຕອ້ງຊຳລະໃນທຸກໆທ້າຍປີຮຽນ (ຢ່າງຊ້າ ວັນທີ 31 ພຶດສະພາ) ນີ້ກໍ່ເພື່ອຮັບປະກັນບ່ອນຮຽນໃນສົກຮຽນໜ້າໃນເດືອນກັນຍາ.

3. **ຄ່າຮຽນ**

ຄ່າຮຽນຕອ້ງຊຳລະໃນທຸກໆຕົ້ນສົກຮຽນ ໂດຍອີງຕາມຮູບແບບການຊຳລະທີ່ລະບຸໃນຂໍ້ 6. ຄ່າຮຽນແມ່ນກວມລວມເອົາຄ່າດຳເນີນການຕ່າງໆທີ່ກ່ຽວກັບການສຶກສາ.
ເຊັ່ນດຽວກັນຄ່າຮຽນທີ່ຊຳລະໃນທຸກໆຕົ້ນສົກຮຽນແມ່ນກວມລວມເອົາຄ່າສະໝັກສອບເສັງພາສາອື່ນໆ (1), ຄ່າສະໝັກສອບເສັງຕ່າງໆທີ່ຈຳເປັນໃນສົກຮຽນ(2) ແລະ ຄ່າຊຸດກິລາສຳລັບນັກຮຽນຊັ້ນມັດທະຍົມ.
ສ່ວນຄ່າອຸປະກອນການຮຽນຊັ້ນມັດທະຍົມ, ຄ່າລົດຮັບສົ່ງນັກຮຽນ, ຄ່າອາຫານ ແລະ ຄ່າບັນດາກິດຈະກຳນອກໂມງຮຽນ ຫຼື ຄ່າການໄປທັດສະນະສຶກສາ ສິ່ງເຫຼົ່ານີ້ແມ່ນຈະຖືກຄິດໄລເພີ້ມ.

4. **ຮູບແບບການຊຳລະຄ່າຮຽນ**

ຮູບແບບການຊຳລະຄ່າຮຽນມີດັ່ງນີ້ :

ຮູບແບບ A - ຊຳລະຄັ້ງດຽວໝົດປີ: ກຳນົດຊຳລະຢ່າງຊ້າ ວັນທີ 30 ກັນຍາ ຫຼື **ຊຳລະເປັນໄຕມາດ 3 ຄັ້ງຕໍ່ສົກຮຽນ: ຢ່າງຊ້າ**ວັນທີ 30 ກັນຍາ, ວັນທີ 31 ທັນວາ ແລະ ວັນທີ 30 ເມສາ;
ຮູບແບບ B - ຊຳລະເປັນລາຍເດືອນ : ຄ່າຮຽນທັງໝົດຖືກແບ່ງເປັນ 8 ເດືອນ. ກຳນົດຊຳລະຢ່າງຊ້າຄັ້ງທີ 1 ບ່ໍໃຫ້ກາຍວັນທີ 30 ກັນຍາ 2018 ແລະ ກຳນົດຊຳລະຄັ້ງສຸດຢ່າງຊ້າວັນທີ 30 ເມສາ 2019.
ການຊຳລະຮູບແບບ B ຜູ້ປົກຄອງຕອ້ງໄດ້ຈ່າຍເພີ້ມຕື່ມເດືອນລະ30 $ ສຳລັບຄ່າຈັດການເອກະສານ.

5. ສ່ວນຫຼຸດຄ່າຮຽນສຳລັບຄອບຄົວທີ່ມີລູກຫຼາຍຄົນ

A – ຄອບຄົວທີ່ມີລູກຮຽນໃນໂຮງຮຽນນີ້ 3 ຄົນ ຈະໄດ້ຮັບສ່ວນຫຼຸດ 10 % ຂອງຄ່າຮຽນລວມ ;
B – ຄອບຄົວທີ່ມີລູກຮຽນໃນໂຮງຮຽນນີ້ຫຼາຍກ່ວາ 3 ຄົນຂຶ້ນໄປຈະໄດຮັບສ່ວນຫຼຸດ 20 % ຂອງຄ່າຮຽນລວມ.
ບໍລິສັດພາກສ່ວນລັດ ຫຼື ເອກະຊົນ, ສະມາຄົມ ແລະ ອົງການຈັດຕັ້ງສາກົນຕ່າງໆຈະບ່ໍມີສິດໄດ້ຮັບສ່ວນຫຼຸດຄ່າຮຽນ.

6. ວິທີການຊຳລະ

ຕາມລະບຽບການຖ້າຈຳນວນເງິນສູງກ່ວາ 300 ໂດລາ ທຽບເທົ່າກັບເງິນກີບ ຫຼື ເງິນເອີໂຣ **ຕອ້ງຊຳລະໂດຍການໂອນຜ່ານທາງທະນາຄານ** ຫຼື **ຊຳລະດ້ວຍແຊກເງິນສົດສະນຸກ**ເງິນໂດລາ. ພະແນກການເງິນຈະສາມາດຮັບເງິນສົດໃນຈຳນວນຕ່ຳກ່ວາ 300 ໂດລາ ເທົ່ານັ້ນ. ໃນກໍລະນີຊຳລະເປັນເງິນກີບ ຫຼື ເງິນເອີໂຣ, ອັດຕາແລກປ່ຽນຈະອີງຕາມອັດຕາແລກປ່ຽນຈາກສະຖານທູດຝຣັ່ງ ທ່ານສາມາດເບິ່ງໄດ້ທີ່ເວບໄຊ : www.economie.gouv.fr/dgfip/taux_chancellerie_change . ຄ່າທຳນຽມການໂອນເງິນແມ່ນຄວາມຮັບຜິດຊອບຂອງຜູ້ໂອນ.

7. **ກໍລະນີຊຳລະຊ້າ**

A - ໃນກໍລະນີຊຳລະຊ້າກ່ວາ 7 ວັນຫຼັງຈາກມື້ທີ່ກຳນົດໃນໃບແຈ້ງຊຳລະຄ່າຮຽນ ທາງໂຮງຮຽນຈະໄດ້ປະຕິບັດການປັບໄໝຕາມກົດລະບຽບຈົນເຖິງມື້ທີ່ຄ່າຮຽນຖືກຊຳລະຄົບຖ້ວນ.

ລະບຽບການປັບໄໝ :

ໃບແຈ້ງເຕືອນເທື່ອທີໜຶ່ງ ໃນວັນທີ 8 ຂອງເດືອນຕໍ່ໄປອີງຕາມວັນທີລະບຸໃນໃບແຈ້ງຊຳລະຄ່າຮຽນ: ປັບໄໝ 10% ຂອງຈຳນວນເງິນທີ່ຕອ້ງຊຳລະ
ໃບແຈ້ງເຕືອນເທື່ອທີສອງ ໃນວັນທີ 2 ຂອງເດືອນທີສອງອີງຕາມວັນທີລະບຸໃນໃບແຈ້ງຊຳລະຄ່າຮຽນ: ປັບໄໝ 15% ຂອງຈຳນວນເງິນທີ່ຕອ້ງຊຳລະ
ໃບແຈ້ງເຕືອນເທື່ອທີສາມ ໃນວັນທີ 2 ຂອງເດືອນທີສາມອີງຕາມວັນທີລະບຸໃນໃບແຈ້ງຊຳລະຄ່າຮຽນ: ປັບໄໝ 20% ຂອງຈຳນວນເງິນທີ່ຕອ້ງຊຳລະ
ໃບແຈ້ງຊຳລະຄ່າຮຽນ ແລະ ໃບແຈ້ງເຕືອນຈະຖືກສົ່ງຫາຄອບຄົວໂດຍກົງ ຫຼື ຜ່ານນັກຮຽນ ຫຼື ສົ່ງທາງອີເມວ.

ຂໍ້ຄວນເອົາໃຈໃສ່ : ຄອບຄົວທີ່ບ່ໍຊຳລະຄ່າຮຽນຕາມລະບຽບການເງິນຂອງໂຮງຮຽນຈະຖືກປະຕິບັດຕາມກົດລະບຽບດັ່ງລຸ່ມນີ້ຈົນກ່ວາຄ່າຮຽນດັ່ງກ່າວຈະຖືກຊຳລະຄົບຖ້ວນ:
ຄອບຄົວຈະບ່ໍສາມາດໃຫ້ເດັກເຂົ້າຮ່ວມທັດສະນະສຶກສາຕ່າງໆຂອງໂຮງຮຽນທີ່ຕອ້ງມີຄ່າໃຊ້ຈ່າຍ ແລະ ຈະບ່ໍສາມາດລົງທະບຽນຮຽ່ນຕໍ່ໃຫ້ເດັກໃນສົກຮຽນຕໍ່ໄປ ;
B – ໃນກໍລະນີທີ່ຄອບຄົວຍັງບ່ໍມາຊຳລະເງິນຄ່າຮຽນຕາມໃບແຈ້ງເຕືອນທີສາມ ໂຮງຮຽນມີສິດທີ່ຈະບ່ໍຮັບເດັກເຂົ້າຫອ້ງຮຽນ.

8. **ລະບຽບປະຕິບັດໃນກໍລະນີເຂົ້າຮຽນ ຫຼື ໃນກໍລະນີຍົກຍ້າຍໄປໂຮງຮຽນອື່ນໃນໄລຍະກາງສົກຮຽນ**

ໃນກໍລະນີເຂົ້າຮຽນກາງສົກຮຽນ, ຄ່າຮຽນແມ່ນຄິດໄລ່ຕາມເວລາຮຽນຕົວຈິງ, ຄ່າສະໝັກຮຽນຄັ້ງທຳອິດ ແລະ ຄ່າຮຽນຄິດໄລ່ຕາມພາກຮຽນທີ່ຈະຮຽນ. ລະບຽບການຊຳລະເງິນແມ່ນປະຕິບັດຕາມຂໍ້ກຳນົດທີ່ບ່ງໄວ້ຂ້າງເທິງ.
ໃນກໍລະນີຍົກຍ້າຍໄປໂຮງຮຽນອື່ນໃນກາງສົກຮຽນ, ໂຮງຮຽນຈະສົ່ງເງິນຄ່າຮຽນທີ່ຈ່າຍລ່ວງໜ້າທີ່ຍັງເຫຼືອຄືນ. ແຕ່ວ່າເດືອນທີ່ຮຽນແລ້ວແມ່ນເປັນຄ່າຮຽນບ່ໍສາມາດສົ່ງຄືນ.
ຄ່າສະໝັກຮຽນຕໍ່ສົກຮຽນຕໍ່ໄປບ່ໍສາມາດສົ່ງຄືນຜູ້ປົກຄອງໄດ້. ຄ່າສະໝັກຮຽນຄັ້ງທຳອິດຈະສົ່ງຄືນຜູ້ປົກຄອງໃນກໍລະນີທີ່ຖືກປະຕິເສດຮັບເຂົ້າຮຽນເທົ່ານັ້ນຍ້ອນເຫດຜົນຈຳນວນນັກຮຽນຫຼາຍເກີນກຳນົດ.
ໃນກໍລະນີນັກຮຽນກັບມາຮຽນຄືນຫຼັງຈາກໄດ້ຍົກຍ້າຍໄປໂຮງຮຽນອື່ນບ່ໍເກີນ 2ປີ ຄ່າສະໝັກແມ່ນຈະຖືກປະຕິບັດຕາມຄ່າສະໝັກຮຽນຕໍ່ໃນສົກຮຽນຕໍ່ໄປ. ລະບຽບການນີ້ແມ່ນຈະບ່ໍຖືກປະຕິບັດກັບຜູ້ປົກຄອງທີ່ຊຳລະເງິນຄ້ຳປະກັນໃນກໍລະນີຍົກຍ້າຍ, ໃນກໍລະນີນີ້ແມ່ນຈະປະຕິບັດຕາມຄ່າສະໝັກຮຽນຄັ້ງທຳອິດສຳລັບນັກຮຽນກັບມາຮຽນຄືນ.

9. **ການບໍລິການອື່ນໆ**

ລະບຽບການຊຳລະເງິນສະໝັກຮຽນກິດຈະກຳນອກໂມງຮຽນ ແລະ ກິດຈະກຳອື່ນໆແມ່ນຕ້ອງຊຳລະໃນເວລາສະໝັກຕົວຈິງ ແລະ ຈະບ່ໍມີການສົ່ງເງິນຄືນຍົກເວັ້ນກິດຈະກຳທີ່ສະໝັກຖືກຍົກເລີກ ຫຼື ມີຜູ້ສະໝັກບ່ໍພຽງພໍ.
ປຶ້ມຕຳລາຮຽນຊັ້ນມັດທະຍົມແມ່ນຊຳລະໃນມື້ຮັບປຶ້ມ ແລະ ຈະບ່ໍມີການສົ່ງເງິນຄ່າຈອງຄືນ.
ເງິນຄ່າອາຫານແມ່ນຊຳລະໂດຍກົງກັບຜູ້ຮັບເໝົາຂອງໂຮງອາຫານຕາມອັດຕາທີ່ລະບຸໄວ້ໂດຍການເຫັນດີຂອງຄະນະກຳມະການຄຸ້ມຄອງໂຮງຮຽນ.

10. **ທຶນການສຶກສາບາງສ່ວນ**

ສຳລັບຄອບຄົວທີ່ໄດ້ຮັບທຶນການສຶກສາສ່ວນໃດສ່ວນໜຶ່ງຈາກ AEFE, ຄ່າສະໝັກຮຽນຄັ້ງທຳອິດ/ຄ່າສະໝັກຮຽນຕໍ່ໃນສົກຮຽນໜ້າ ແລະ ຄ່າຮຽນທີ່ນອກເໜືອຈາກທຶນການສຶກສາທີ່ໄດ້ຮັບ ຜູ້ປົກຕ້ອງຊຳລະສ່ວນຕ່າງນັ້ນຕາມລະບຽບດຽວກັນກັບຜູ້ທີ່ບ່ໍໄດ້ຮັບທຶນ.
ຄອບຄົວທີ່ຍື່ນເອກະສານຂໍທຶນການສຶກສາໃນໄລຍະທີສອງຂອງກອງປະຊຸມກ່ຽວກັບທຶນ (ເດືອນພະຈິກຂອງປີຮຽນ) ຂໍໃຫ້ມາຊຳລະຄ່າສະໝັກຮຽນຄັ້ງທຳອິດ/ຄ່າສະໝັກຮຽນຕໍ່ໃນສົກຮຽນໜ້າ ແລະ ຄ່າຮຽນ.
ພາຍຫຼັງທີ່ໄດ້ຮັບຄຳຕອບຈາກຄະນະກຳມະການພິຈາລະນາທຶນການສຶກສາແຫ່ງຊາດ (ໃນເດືອນທັນວາຂອງປີຮຽນ)ໂຮງຮຽນຈະຫັດແທນເງິນຄືນໃຫ້ຄອບຄົວທີ່ໄດ້ຮັບທຶນ.
ໃນກໍລະນີທີ່ຄອບຄົວບ່ໍປະຕິບັດຕາມກົດລະບຽບການເງິນຕ່າງໆຂອງໂຮງຮຽນ ໂຮງຮຽນສາມາດນຳສະເໜີບັນຫານີ້ເຂົ້າສູ່ກອງປະຊຸມຂັ້ນພື້ນຖານກ່ຽວກັບການຂໍທຶນການສຶກສາ.

ວຽງຈັນ, ທີ 7 ທັນວາ 2017
ຄະນະກຳມະການຄຸ້ມຄອງໂຮງຮຽນ

1. *ໃບຢັ້ງຢືນສອບເສັງລະດັບພາສາຕ່າງ : ພາສາຝຣັ່ງ, ພາສາຈີນ, ພາສາສະເປັນ ແລະ ພາສາອັງກິດ*
2. *3e ສອບເສັງຈົບຊັ້ນມັດທະຍົມຕົ້ນ, Première ສອບເສັງເກັບຄະແນນສຳລັບສອບເສັງຈົບຊັ້ນມັດທະຍົມປາຍ ແລະ Terminale ສອບເສັງຈົບຊັ້ນມັດທະຍົມປາຍ.*